# ວັດປ່າລາວວູດແລນດ໌

## ສູນຍ໌ປະຕິບັຕທັມມ໌ ແລະເຜີຍແຜ່ທັມມະ

WPLW 38702 NW Pacific Hwy; Woodland, WA 98674

**Website :** www.watpalao.org **Email :** watpalao@frontier.com **Phone:** 360-225-1675


May 27, 2015

# ສາຣຈາກປະທານ

ວັດປ່າລາວວູດແລນດ໌ (ວປລວ) ຣັຖວໍຊິງຕັນ ຍິນດີຕ້ອນຮັບທຸກໆທ່ານດ້ວຍຄວາມຈິງໃຈ, ວັດແຫ່ງນີ້ ໄດ້ຣິເຣີ່ມ ແລະຈົດທະບຽນຖືກຕ້ອງຕາມກົຕໝາຍຢູ່ໃນຣັຖ ວໍຊິງຕັນ ແຕ່ວັນທີ ໖ ສິງຫາ, ປີ ພ.ສ. ໒໕໕໗. ໂດຍກຸ່ມຊາວພຸທ ລາວ/ອາເມຣິກາ ທີ່ມີວິໄສຍ໌ທັສນ໌ກວ້າງໄກ ແລະຊັດເຈນໃນການດຳເນີນກິຈກັມມ໌ ໄປສູ່ **"ການຝຶກວິປັສສນາກັມມະຖານ ເພື່ອໃຫ້ຈິຕໃຈສງົບງຽບປອດໂປ່ງ"**, ດ້ວຍ **"ຄວາມເຊື່ອໝັ້ນ"** ແລະສິ່ງທີ່ເປັນຄຸນຄ່ານິຍົມຫລັກໃນເບື້ອງຕົ້ນ ຂອງພວກຂ້າພະເຈົ້ານັ້ນ ແມ່ນເນັ້ນໜັກໄປທາງດ້ານ ການໃຫ້ການບໍຣິການ ຝ່າຍວິປັສສນາກັມມະຖານ ຫລື ການນັ່ງສະມາທິເປັນຈຸດສຳຄັນ.

ວັດປ່າລາວ ເປັນສະຖານທີ່ທາງດ້ານວິນິສໄສຍ໌, ຄົ້ນຄວ້າຮ່ຳຮຽນ ແລະຝຶກອົບຣົມດ້ານວິປັສສນາກັມມະຖານ. ໃນນີ້ ພຣະພິຊຸສົງຄ໌ ແມ່ນອົງຄ໌ປະກອບທີ່ມີບົທບາທໃນການນຳພາດ້ານພິທີກັມມ໌ຕ່າງໆທີ່ສຳຄັນ ແລະນອກຈາກນີ້, ສະຖານທີ່ແຫ່ງນີ້ ຍັງເປັນບ່ອນເຕົ້າໂຮມຂອງສັງຄົມ ໃນການສເລີມສລອງເທສການ ງານບຸນຍ໌ປະເພນີຕ່າງໆ ຕາມແບບດັ່ງເດີມຂອງຊຸມຊົນຊາວລາວທີ່ມີມາຊ້ານານ.

ວັດແຫ່ງນີ້ ແມ່ນອົງຄ໌ການຈັດຕັ້ງທາງສາສນາທີ່ບໍ່ຫາຜົລກຳໄຣ ແລະເປັນວັດລາວແຫ່ງທຳອິດທີ່ຕັ້ງຂຶ້ນ ໃນພາຄຕາເວັນຕົກສ່ຽງໃຕ້ຂອງຣັຖ ວໍຊິງຕັນ ດ້ວຍການສນັບສນູນຢ່າງແຂງແຮ່ນ ຈາກບັນດາຊາວພຸທໃນເຂຕເມືອງ ແວນຄູເວີຣ໌ ແລະພອຕແລນດ໌ ຣັຖອໍຣິກອນ. ສະມາຊິກສ່ວນຫລວງຫລາຍ ຍັງພາກັນຍຶດຖືຮີຕຄອງປະເພນີ ແລະພາຄປະຕິບັຕຂອງຊາວພຸທຕລອດມາ ພ້ອມກັນນີ້ ຍັງມີຄວາມມຸ່ງໝັ້ນຈະສືບຕໍ່ປະສານງານ ກັບວັດວາອາຣາມອື່ນໆໃນເຂຕໃກ້ຄຽງ ແລະຕ່າງຖິ່ນ ເພື່ອໃຫ້ການຮ່ວມມືໄດ້ມາຕຖານການຢູ່ຮ່ວມກັນເພີ່ມຂຶ້ນ ໂດຍການຮຽນຮູ້ຈາກບົທຮຽນທີ່ຜ່ານມາ ຮູ້ຈັກການໃຫ້ອະໄພຍ໌ຊຶ່ງກັນແລະກັນ ສົມເປັນຊາວພຸທທີ່ແທ້ຈິງ ໂດຍມີການ **ວາງແຜນ, ເຮັດໄປພ້ອມ, ສຶກສາໄປນຳ, ລົງພາຄປະຕິບັຕຄືນໃໝ່, (ວ.ຮ.ສ.ລ)** ຖ້າຍັງມີການຜິດພາດຢູ່. ສິ່ງເຫລົ່ານີ້ ໄດ້ຖືເປັນແມ່ແບບດ້ານການປະຕິບັຕຂອງພວກຂ້າພະເຈົ້າຢູ່ຕລອດເວລາ.

ຣາຍໄດ້ແຫລ່ງຕົ້ນຕໍຂອງວັດ ແມ່ນມາຈາກສັທທາ ການໃຫ້ທານ ການບໍຣິຈາຄຕ່າງໆ ຈາກສະມາຊິກຜູ່ມີໃຈເປັນກຸສົລ ແລະການຫາຣາຍໄດ້ໃນງານບຸນຍ໌ສິລກິນທານຕ່າງໆ. ພວກຂ້າພະເຈົ້າ ຂໍເຊີນຊວນທຸກທ່ານທຸກເພສທຸກໄວຍ໌ ຈົ່ງໄປສັມພັສກັບຊຸມຊົນຊາວພຸທລາວ ໃນດິນແດນຈຳນວນ 16.4 ເອເກີຣ໌ ທີ່ເຕັມໄປດ້ວຍທັມມະຊາຕ ທີ່ສວຍສົດງົດງາມແຫ່ງນີ້ດ້ວຍ. ***ດ້ວຍຄວາມເຄົາຣົພ ແລະນັບຖື,***

***ຈາກ:*** ໄຊຍະສິທ ສົມມາພິລາວົງສ໌ *ປະທານຄນະກັມມະການບໍຣິຫາຣ ວັດປ່າລາວວູດແລນດ໌.*